**ມິຊຊາອາທິດທີ 2 ກຳນົດປາສກາ**

**ວັນທີ 16 ເມສາ 2023**

**ສະຫລອງພຣະເມດຕາຂອງພຣະເຢຊູເຈົ້າ**



**ພຣະວໍລະສານໂດຍນັກບຸນຢວງ 20, 19-31**

ໃນວັນຕົ້ນອາທິດເວລາຕົກຄ່ຳແລະປະຕູບ່ອນພວກລູກສິດໂຮມກັນຢູ່ນັ້ນກໍອັດໄວ້ຢ່າງແໜ້ນຍ້ອນຢ້ານພວກຢິວ. ພຣະເຢຊູເຈົ້າສະເດັດມາປະທັບຢືນຢູ່ກາງພວກເຂົາກ່າວວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ". ກ່າວແລ້ວພຣະອົງກໍຊົງສຳແດງພຣະຫັດແລະພຣະສີຂ້າງໃຫ້ພວກລູກສິດເບິ່ງ. ພວກລູກສິດພາກັນຊື່ນຊົມຍິນດີຍ້ອນໄດ້ເຫັນພຣະອົງເຈົ້າ. ພຣະອົງກ່າວເປັນຄັ້ງທີສອງວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ, ພຣະບິດາໄດ້ຊົງໃຊ້ເຮົາມາແນວໃດ, ເຮົາກໍໃຊ້ພວກເຈົ້າໄປແນວນັ້ນດ້ວຍ". ແລ້ວພຣະອົງຊົງເປົ່າລົມໃສ່ພວກເຂົາພ້ອມກັບກ່າວວ່າ: "ຈົ່ງຮັບພຣະຈິດເຈົ້າ, ພວກເຈົ້າໂຜດບາບໃຫ້ຜູ້ໃດບາບຜູ້ນັ້ນກໍຈະຫລຸດ, ແລະພວກເຈົ້າໜ່ວງຈ່ອງບາບຜູ້ໃດໄວ້ບາບຂອງຜູ້ນັ້ນກໍຈະຍັງຄ້າງຄາຢູ່".

ສ່ວນໂທມາທີ່ມີຊື່ວ່າດີດິມ, ຜູ້ໜຶ່ງໃນພວກສາວົກສິບສອງຄົນ, ບໍ່ໄດ້ຢູ່ນຳໝູ່ເວລາພຣະເຢຊູເຈົ້າປະຈັກມານັ້ນ. ພາຍຫລັງ, ພວກສາວົກອື່ນໆຈຶ່ງເລົ່າໃຫ້ໂທມາຟັງວ່າ: "ພວກເຮົາໄດ້ເຫັນພຣະອົງເຈົ້າແລ້ວ." ໂທມາຕອບວ່າ: "ຖ້າເຮົາບໍ່ໄດ້ເຫັນຮອຍຕະປູຢູ່ທີ່ພະຫັດ,ບໍ່ໄດ້ເອົານິ້ວມືແຫຍ່ເຂົ້າຮອຍຕະປູນັ້ນແລະບໍ່ໄດ້ເອົາມືແຫຍ່ເຂົ້າຮອຍບາດບ່ອນພຣະສີຂ້າງແລ້ວ, ເຮົາກໍຈະບໍ່ເຊື່ອ."

ແປດມື້ຕໍ່ມາ, ພວກສາວົກກໍໂຮມກັນອີກແລະໂທມາກໍຢູ່ນຳດ້ວຍ. ພຣະເຢຊູເຈົ້າສະເດັດມາໂດຍປະຕູຍັງອັດຢູ່. ພຣະອົງປະທັບຢືນກາງພວກເຂົາແລະກ່າວວ່າ: "ສັນຕິສຸກຈົ່ງມີແກ່ພວກເຈົ້າ." ແລ້ວພຣະອົງກ່າວກັບໂທມາວ່າ: "ຈົ່ງເອົານິ້ວມືຂອງເຈົ້າແຫຍ່ເຂົ້າບ່ອນນີ້ແລະຈົ່ງເບິ່ງມືຂອງເຮົາ. ຢ່າຄື້ດຶງອີກ, ແຕ່ຈົ່ງເຊື່ອເຖີດ." ໂທມາຂາບທູນວ່າ "ໂອພຣະອົງເຈົ້າແລະພຣະເຈົ້າຂອງຂ້າພະເຈົ້າ !" ພຣະເຢຊູເຈົ້າກ່າວວ່າ: "ໂທມາເອີຍ! ເຈົ້າເຊື່ອຍ້ອນເຈົ້າໄດ້ເຫັນເຮົາ; ບຸນລາບແກ່ຜູ້ທີ່ເຊື່ອແມ່ນວ່າບໍ່ໄດ້ເຫັນ."

ພຣະເຢຊູເຈົ້າຊົງທຳອັດສະຈັນອື່ນໆອີກຫລາຍຕໍ່ໜ້າພວກລູກສິດ ແຕ່ບໍ່ໄດ້ບັນທຶກໄວ້ໃນໜັງສືເຫລັ້ມນີ້. ສິ່ງເຫລົ່ານີ້ໄດ້ຂຽນບັນທຶກໄວ້ກໍເພື່ອໃຫ້ພວກທ່ານເຊື່ອວ່າພຣະເຢຊູແມ່ນພຣະຄຣິສໂຕພຣະບຸດຂອງພຣະເປັນເຈົ້າ ແລະເມື່ອເຊື່ອດັ່ງນີ້ແລ້ວ ພວກທ່ານຈະໄດ້ຊີວິດເດຊະພຣະນາມຂອງພຣະອົງ.

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ**

ວັນອາທິດທີ່ຜ່ານມາ, ພວກເຮົາໄດ້ສະຫລອງໄຊຊະນະຂອງພຣະເຢຊູເຈົ້າເໜືອຄວາມຕາຍ. ພຣະອົງໄດ້ຊົງກັບເປັນຄືນມາຈິງແທ້. ອັລເລລູຢາ! ແຕ່ພວກລູກສິດຍັງບໍ່ເຂົ້າໃຈເຖິງເຫດການນີ້. ດັ່ງນັ້ນ, ພວກເຂົາຈຶ່ງມີຄວາມຢ້ານກົວແລະປິດປະຕູໄວ້. ຄວາມຢ້ານກົວຂອງພວກລູກສິດທຳໃຫ້ພວກເຮົາເຂົ້າໃຈວ່າ ຖ້າພວກເຮົາຫາກຂາດພຣະເຢຊູເຈົ້າແລ້ວຊີວິດຂອງພວກເຮົາກໍຈະຢູ່ໃນຄວາມມືດແລະຄວາມຢ້ານກົວ.

ວັນນີ້ພວກລູກສິດກໍພາກັນຊຸມນຸມພາວະນາເປັນຈິດໜຶ່ງໃຈດຽວກັນ. ແລະເວລານັ້ນເອງພຣະເຢຊູເຈົ້າກໍປະຈັກຢູ່ທ່າມກາງພວກເຂົາ. ແລະຄຳເວົ້າທຳອິດເມື່ອພຣະເຢຊູເຈົ້າປະຈັກມາຫາພວກລູກສິດວັນນີ້ແມ່ນຄຳ "ສັນຕິສຸກ". ສັນຕິສຸກນີ້ບໍ່ແມ່ນແບບຂອງໂລກ. ບໍ່ແມ່ນສັນຕິສຸກທີ່ຍາດຊີງມາໄດ້ດ້ວຍອຳນາດ, ພະລັງແລະຄວາມຮຸນແຮງ. ແຕ່ແມ່ນສັນຕິສຸກມາຈາກພຣະເຢຊູເຈົ້າຜູ້ໄດ້ຜ່ານຄວາມທຸກທໍລະມານ, ຕາຍແລະໄດ້ກັບຄືນມາ.

ສ່ວນພວກເຮົາຜູ້ເປັນລູກສິດຂອງພຣະເຢຊູເຈົ້າ, ພວກເຮົາສຳພັດສັນຕິສຸກຂອງພຣະອົງໄດ້ດ້ວຍວິທີໃດ? ພວກເຮົາສາມາດສຳພັດສັນຕິສຸກຂອງພຣະອົງໄດ້ໃນເວລາພວກເຮົາມາຊຸມນຸມພາວະນາ, ມາຟັງພຣະວາຈາແລະມາຮ່ວມພິທີບິປັງກັບພຣະອົງໃນພິທີບູຊາມິຊຊາ. ພວກເຮົາສາມາດສຳພັດສັນຕິສຸກຂອງພຣະເຢຊູເຈົ້າໄດ້ເມື່ອພວກເຮົາເຊື່ອວ່າພຣະອົງຊົງຮັກແພງພວກເຮົາຢູ່ສະເໝີ. ແລະເປັນຕົ້ນ, ພວກເຮົາສຳພັດສັນຕິສຸກຂອງພຣະເຈົ້າໄດ້ຢ່າງແທ້ຈິງເມື່ອເວລາພວກເຮົາຮັບສິນອະໄພບາບ. ຍ້ອນພຣະເມດຕາກະລຸນາຂອງພຣະເຢຊູເຈົ້າໄດ້ເຂົ້າມາໃນຈິດໃຈພວກເຮົາ, ທຳໃຫ້ດວງໃຈຂອງພວກເຮົາເປັນດວງໃຈໃໝ່, ດວງໃຈທີ່ເຕັມດ້ວຍຄວາມຮັກ: ຮັກພຣະເຈົ້າແລະຮັກເພື່ອນພີ່ນ້ອງຂອງພວກເຮົາ. ນີ້ແລແມ່ນສັນຕິສຸກທີ່ແທ້ຈິງຊຶ່ງມາຈາກພຣະເຢຊູເຈົ້າ. ແລະກໍແມ່ນສັນຕິສຸກນີ້ເອງທີ່ເປັນເຄື່ອງໝາຍແຫ່ງການປະທັບຢູ່ຂອງພຣະເຢຊູເຈົ້າທ່າມກາງພວກເຮົາແລະຢູ່ໃນພວກເຮົາ. ເມື່ອພວກເຮົາໄດ້ຮັບສັນຕິສຸກຈາກພຣະເຢຊູຜູ້ກັບເປັນຄືນມາແລ້ວ, ພວກເຮົາກໍຕ້ອງເປັນພິຍານແລະເປັນເຄື່ອງມືແຫ່ງສັນຕິສຸກນີ້ໃນຊີວິດຂອງພວກເຮົາ. ເພື່ອຄອບຄົວ, ສັງຄົມແລະໂລກຂອງພວກເຮົາຈະໄດ້ມີແຕ່ຄວາມຮັກແລະສັນຕິສຸກຂອງພຣະເຈົ້ານັ້ນແລ.

**ພາວະນາ**

ໂອພຣະເຢຊູເຈົ້າ ຜູ້ເປັນອົງແຫ່ງສັນຕິສຸກ ໂຜດປະທານສັນຕິສຸກຂອງພຣະອົງໃຫ້ລູກ, ເພື່ອລູກຈະໄດ້ເປັນພິຍານແລະເຄື່ອງມືແຫ່ງສັນຕິສຸກຂອງພຣະອົງໃນຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ